ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ພິທີເຊັນບົດບັນທຶກສືບຕໍ່ຄວາມຮ່ວມມືທາງດ້ານວິຊາການ ໂຄງການພັດທະນາການຜະລິດນ້ຳມັນກາຊອນຊີວະພາບຈາກປາມນ້ຳມັນ

ໃນວັນທີ 19 ທັນວາ 2018, ໄດ້ມີພິທີເຊັນບົດບັນທຶກສືບຕໍ່ຄວາມຮ່ວມມືທາງດ້ານວິຊາການໂຄງການພັດທະນາການຜະລິດນ້ຳມັນກາຊອນຊີວະພາບ ຈາກປາມນ້ຳມັນລະຫວ່າງບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ສະຖາບັນສົ່ງເສີມພະລັງງານທົດແທນ ກະຊວງພະລັງງານ ແລະ ບໍແຮ່ ຢູ່ທີ່ໂຮງແຮມຄາວພາຊາ ນະຄອນຫຼວງວຽງຈັນ, ຕ່າງໜ້າລົງນາມເຊັນສັນຍາໃນຄັ້ງນີ້ໂດຍ ທ່ານ ຈັນໂທ ມີລັດຕະນະແພງ ວ່າການຫົວໜ້າສະຖາບັນສົ່ງເສີມພະລັງງານທົດແທນ ກະຊວງພະລັງງານ ແລະ ບໍແຮ່ ແລະ ທ່ານ ອຸດົມ ແກ້ວທະວົງ ຜູ້ອຳນວຍການບໍລິສັດ ລາວອາໂກຣເທັກ ມະຫາຊົນ, ພິທີເຊັນບົດບັນທຶກໃນຄັ້ງນີ້ ເພື່ອເປັນການສືບຕໍ່ຮ່ວມມືທາງດ້ານວິຊາການໃນການສົ່ງເສີມ, ພັດທະນາ ການຜະລິດ, ປຸງແຕ່ງ, ການບໍລິການ ແລະ ການນຳໃຊ້ນ້ຳມັນກາຊອນຊີວະພາບ ຈາກວັດຖຸດິບທີ່ມີຢູ່ພາຍໃນປະເທດ. ໂຄງການຜະລິດນ້ຳມັນກາຊອນຊີວະພາບ ເພື່ອທົດແທນການນຳເຂົ້ານັບເປັນນະໂຍບາຍຫຼັກຂອງລັດຖະບານທີ່ໃຫ້ການສະໜັບສະໜູນໃຫ້ດຳເນີນການເພື່ອຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟຈາກຕ່າງປະເທດ. ໃນປັດຈຸບັນ ບໍລິສັດເປັນຜູ້ຜະລິດນ້ຳມັນກາຊອນຊີວະພາບທີ່ຜະລິດຈາກນ້ຳມັນປາມພຽງຜູ່ດຽວໃນ ສປປ ລາວ ແລະ ພ້ອມກັນນັ້ນ ບໍລິສັດຍັງສົ່ງເສີມປະຊາຊົນປູກປາມ ເພື່ອເປັນວັດຖຸດິບໃນການຜະລິດນ້ຳມັນກາຊອນຊີວະພາບໃຫ້ເພີ່ມຂຶ້ນເລື້ອຍໆ.

